# ຍີ່ປຸ່ນ ຊ່ວຍສ້າງຄວາມເຂັ້ມແຂງ ແກ່ແພດທັນຕະກຳລາວ



ຂປລ. ລັດຖະບານຍີ່ປຸ່ນ ໄດ້ຕົກລົງໃຫ້ການ ຊ່ວຍເຫລືອລ້າສຳລັບ "ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ພະຍາບານພາຍ ໄຕ້ການຝຶກອົບຮົມທາງດ້ານທັນຕະກຳ ໄລຍະ 2" ເປັນຈຳນວນເງິນ 3ແສນກ່ວາ ໂດລາສະຫະລັດ ຊຶ່ງພິທີມອບ-ຮັບ ທຶນຊ່ວຍເຫລືອດັ່ງກ່າວ ໄດ້ມີຂຶ້ນໃນວັນທີ 1 ສິງຫານີ້ ທີ່ນະຄອນຫລວງວຽງຈັນ ລະຫວ່າງ ທ່ານນາງ ຈຸນໂກະ ໂຢໂກະຕະ ເອກອັກຄະຣາຊະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ປະເທດຍີ່ປຸ່ນ ປະຈຳ ສປປ. ລາວ ແລະ ທ່ານ ໂຕະຊິມິຊິ ໂມະຈິດະ, ຜູ້ຈັດການໂຄງການຂອງອົງການ OISDE.

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ພະຍາບານດ້ວຍການຝຶກອົບຮົມທາງດ້ານການສຶກສາທັນຕະກຳ ໄລຍະ 1 ທີ່ ຈັດຂຶ້ນໂດຍອົງການ OISDE ແມ່ນການຝຶກງານ ແລະ ສອນ ຄວາມຮູ້ພື້ນຖານ ແລະ ທັກສະໃຫ້ແກ່ພະຍາບານຂອງສຸກສາລາ ແລະ ນັກຮຽນຂອງໂຮງຮຽນພະຍາບານທ້ອງຖິ່ນ. ສ່ວນໂຄງການໄລຍະ 2 ແມ່ນຈະສົ່ງເສີມພະຍາບານ ຂອງສຸກສາລາ ແລະ ສົ່ງເສີມນັກຮຽນຂອງໂຮງຮຽນພະຍາບານທ້ອງຖິ່ນ ລົງປະຕິບັດ ຕົວຈິງ ກໍຄື ການພະຍາບານໃຫ້ແກ່ປະຊາຊົນໂດຍພາຍໃຕ້ ໂຄງການນີ້ ກໍຫວັງຢ່າງຍິ່ງວ່າຈະຊ່ວຍຫຼຸດຜ່ອນຈຳນວນການຕິດເຊື້ອ ກໍຄືຊ່ວຍຫຼຸດຜ່ອນຜູ້ປ່ວຍທາງຊ່ອງປາກໄດ້.

ອົງການ OISDE ໄດ້ໃຫ້ການສົ່ງເສີມທາງດ້ານການສຶກສາທັນຕະກຳຢູ່ລາວມາຕັ້ງແຕ່ປີ 2002 ແລະ ຈະເລີ່ມປະຕິບັດ ໂຄງການ ໄລຍະ 2 ຂຶ້ນທີ່ແຂວງວຽງຈັນ ໃນວັນທີ 1 ສິງຫາ ໄປຈົນເຖິງວັນທີ 31 ກໍລະກົດ 2014 ເປັນໄລຍະເວລາ 1 ປີ.